**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງສະໜ້ອຍ.

ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ.

ເລກທີ:..79.../ຍທຂ.ສໝ.

ລົງວັນທີ:......**27/03/2026**.......

## ໜັງສືແຈ້ງການ

## ເຊີນເຂົ້າຮ່ວມປະມູນ (ຈັດຊື້-ຈັດຈ້າງ).

**ເຖິງ:** ບໍລິສັດ ຮັບເໝົາກໍ່ສ້າງ ແລະ ສ້ອມແປງຂົວທາງ ຕ່າງໆ ທີ່ຢູ່ພາຍໃນ ແລະ ຕ່າງແຂວງ ທີ່ນັບຖື.

**ເລື່ອງ:** ປະກາດແຈ້ງການເຊີນເຂົ້າຮ່ວມການປະມູນ (ຈັດຊື້-ຈັດຈ້າງ) ໂຄງການ ຟື້ນຟູຟຸດບາດຂາງທາງຢາງ, ຕາບຊຸມຮົ້ງໄກ່ແຕ່ສີ່ແຍກປ້ອມຕຳຫຼວດ ຫາ ສາມແຍກຫຼັງຫ້ອງວ່າການ ລວງຍາວ ຂ້າງຊ້າຍ, ຂວາ 1,594 m, ເມືອງສະໜ້ອຍ..

- ອີງຕາມ ກົດໝາຍ, ເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ວ່າດ້ວຍ ການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.
- ອີງຕາມ ກົດໝາຍ, ເລກທີ 72 /ສພຊ, ລົງວັນທີ 15 ທັນວາ 2015 ວ່າດ້ວຍ ການລົງທຶນຂອງລັດ (ສະບັບປັບປຸງ).
- ອີງຕາມ ຂໍ້ຕົກລົງຂອງເຈົ້າເມືອງງສະໜ້ອຍ ສະບັບເລກທີ: 134/ຈມ.ສໝ, ລົງວັນທີ: 13/06/2023 ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວວຽກງານ ຂອງຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງສະໜ້ອຍ.
- ອີງຕາມ ຂໍ້ຕົກລົງຂອງປະທານ ຄະນະກຳມະການປົກຄອງເມືອງ, ສະບັບເລກທີ: 76 /ຄປມ.ສໝ, ລົງວັນທີ: 26/03/2026 ວ່າດ້ວຍ ມອບສິດໃຫ້ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງສະໜ້ອຍ ເປັນເຈົ້າຂອງໂຄງການ ຟື້ນຟູຟຸດບາດຂາງທາງຢາງ, ຕາບຊຸມຮົ້ງໄກ່ແຕ່ສີ່ແຍກປ້ອມຕຳຫຼວດ ຫາ ສາມແຍກຫຼັງຫ້ອງວ່າການ ລວງຍາວ ຂ້າງຊ້າຍ, ຂວາ 1,594 m, ພ້ອມທັງເປີດການປະມູນເອົາບໍລິສັດມາຮັບເໝົາ ໂຄງການດັ່ງກ່າວ.

**ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງສະໜ້ອຍ** ຂໍຖືເປັນກຽດແຈ້ງການມາໃຫ້ທ່ານຊາບວ່າ: ບໍລິສັດໃດມີຄວາມສົນໃຈ ຕ້ອງການເຂົ້າຮ່ວມການປະມູນ ໂຄງການ ຟື້ນຟູຟຸດບາດຂາງທາງຢາງ, ຕາບຊຸມຮົ້ງໄກ່ແຕ່ສີ່ແຍກປ້ອມຕຳຫຼວດ ຫາ ສາມແຍກຫຼັງຫ້ອງວ່າການ ລວງຍາວ ຂ້າງຊ້າຍ, ຂວາ 1,594 m, ເພື່ອຮັບເໝົາກໍ່ສ້າງ ເຊິ່ງຜູ້ສົນໃຈຕ້ອງມີໃບດຳເນີນທຸລະກິດດ້ານການກໍ່ສ້າງຂົວທາງຄົບຖ້ວນຕາມລະບຽບກົດໝາຍ, ສ່ວນການສຳລະສະສາງ ແມ່ນຕາມສົກງົບປະ ມານທີ່ມີໃນແຕ່ລະປີ, ການເຂົ້າຮ່ວມການປະມູນມີລາຍລະອຽດດັ່ງລຸ່ມນີ້.

1. ໂຄງການ ຟື້ນຟູຟຸດບາດຂາງທາງຢາງ, ຕາບຊຸມຮົ້ງໄກ່ແຕ່ສີ່ແຍກປ້ອມຕຳຫຼວດ ຫາ ສາມແຍກຫຼັງຫ້ອງວ່າການ ລວງຍາວ ຂ້າງຊ້າຍ, ຂວາ 1,594 m, ເມືອງສະໜ້ອຍ, ເວລາການກໍ່ສ້າງ ແມ່ນ 24 ເດືອນ, ເລີ່ມລົງມືກໍ່ສ້າງນັບແຕ່ວັນເຊັນສັນຍາ ເປັນຕົ້ນໄປ.
2. ເອກະສານປະມູນສາມາດສະເໜີຊື້ ທີ່ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງສະໜ້ອຍ ໃນເວລາ ທາງລັດຖະການ, ມີລາຄາຊຸດລະ: 2.000.000ກີບ (ສອງລ້ານກີບ), ການປະມູນໃຊ້ເວລາ: 1 ວັນ.
3. ການປະມູນຈະໄດ້ຈັດຂຶ້ນ, ໃນວັນທີ: 01/05/2026 ທີ່ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງສະໜ້ອຍ.

**<u>ໝາຍເຫດ:</u>** ເອກະສານປະກອບໃນການປະມູນມີດັ່ງນີ້.

1. ໃບສະເໜີຂໍອະນຸຍາດຈັດຕັ້ງປະຕິບັດໂຄງການ (ໃບເຈາະຈຳນົງ) ແບບຟອມຍື່ນປະມູນ ຈຳນວນ 01 ໃບ;
2. ໃບຄິດໄລ່ລາຄາແຜ່ນຜັງການກໍ່ສ້າງຄົບຊຸດ ຈຳນວນ 01 ຊຸດ;
3. ໃບທະບຽນວິສາຫະກິດ (ຈາກ ພະແນກ ການຄ້າແຂວງ) ຈຳນວນ 01 ໃບ;
4. ໃບໄລ່ລຽງອາກອນປີໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຈຳນວນ 01 ໃບ;
5. ໃບຢັ້ງຢືນ ຜົນງານຜ່ານມາ ຈຳນວນ 01 ໃບ;
6. ໃບປະກາດສະນີຍະບັດຂອງພະນັກງານວິຊາການ ຂົວທາງ ຂອງບໍລິສັດ ຈຳນວນ 03 ສທ;
7. ຕາຕະລາງແຜນປະຕິບັດວຽກ ແລະ ກຳນົດເວລາການກໍ່ສ້າງ ຈຳນວນ 01 ຊຸດ;
8. ໃບຢັ້ງຢືນ ຖານະການເງິນຈາກທະນາຄານ ຂອງບໍລິສັດ ອາຍຸບໍ່ເກີນ 3 ເດືອນ ຈຳນວນ 01 ໃບ;
9. ເອກະສານຄໍ້າປະກັນຊອງປະມູນ 2% ຈຳນວນ 01 ໃບ.
10. ໃບອະນຸຍາດ ຂໍສືບຕໍ່ ດຳເນີນທຸລະກິດຈາກກະແໜງ ຍທຂ ຈຳນວນ 01 ໃບ;
11. ຕ້ອງມີໃບມອບສິດດຳເນີນທຸລະກິດຈາກບໍລິສັດແມ່ (ຖ້າໄດ້ຮັບຈາກຜູ້ອື່ນ) ຈຳນວນ 01 ໃບ;
12. ໃບຊີວະປະຫວັດຫຍໍ້ຂອງຜູ້ອຳນວຍການບໍລິສັດ ຫຼື ຜູ້ຕາງໜ້າທີ່ໄດ້ຮັບໃບມອບສິດ ຈຳນວນ 01 ຊຸດ;
13. ໃບຢັ້ງຢືນທີ່ຢູ່ຂອງຜູ້ອຳນວຍການບໍລິສັດ ຫຼື ຜູ້ຕາງໜ້າທີ່ໄດ້ຮັບໃບມອບສິດ ຈຳນວນ 01 ຊຸດ;
14. ເອກະສານອື່ນໆທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງການ ມາເຖິງບັນດາບໍລິສັດ ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໂຄງການດັ່ງກ່າວໃນຄັ້ງນີ້ ຕາມເນື້ອໃນ ແລະ ເງື່ອນໄຂຂ້າງເທິງນີ້ດ້ວຍ./.

ທີ່ ລະໜ້ອຍ, ວັນທີ: **27/03/2026**

**ຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ**

ພໍໂທທະຫຼືຣດ ແກ້ວອຸ່ນເຮືອນ